Seattle
EQUITY & ENVIRONMENT INITIATIVE

**ກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມ ປີ 2021 (The Environmental Justice Fund 2021)**

ໂຄງການຂອງເມືອງຊີແອດເຕີນ. ບໍລິຫານໂດຍມູນນິທິ Bullitt.

ພວກເຮົາຮູ້ສຶກຕື່ນເຕັ້ນທີ່ຈະປະກາດໃຫ້ຊາບວ່າປະຈຸບັນນີ້ ກອງທຶນຄວາມຍຸຕິທຳດ້ານສິ່ງແວດລ້ອມກຳລັງເປີດຮັບໃບສະໝັກ ແລະ**ວັນສິ້ນສຸດການຮັບສະໝັກແມ່ນວັນຈັນທີ 13 ເດືອນກັນຍາ ເວລາ 4 ໂມງແລງ**!
ເງິນທຶນນີ້ຊ່ວຍສະນັບສະໜູນຄວາມພະຍາຍາມທີ່ນຳພາໂດຍປະຊາຊົນ ແລະສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນ ເຊິ່ງມັກໄດ້ຮັບຜົນກະທົບຈາກບັນຫາສິ່ງແວດລ້ອມແລະສະພາບອາກາດຫຼາຍກວ່າປະຊາຊົນອື່ນໆທົ່ວໄປ, ກ່າວຄື: ຄົນຜິວດຳ, ຊົນພື້ນເມືອງ, ຄົນຜິວສີ, ຄົນອົບພະຍົບ, ຜູ້ລີ້ໄພ, ຜູ້ທີ່ມີລາຍໄດ້ຕ່ຳ, ເຍົາວະຊົນ ແລະຄົນສູງອາຍຸ.

ໂຄງການຄອບລວມເອົາແນວທາງແກ້ໄຂບັນຫາທີ່ຊຸມຊົນເປັນຜູ້ກຳນົດທາງແກ້ໄຂ ເຊິ່ງປັບປຸງສິ່ງແວດລ້ອມແລະສຸຂະພາບແລະຄວາມເປັນຢູ່ທີ່ດີຂອງຊຸມຊົນ ແລະຕອບສະໜອງຕໍ່ຜົນກະທົບຈາກການປ່ຽນແປງຂອງສະພາບອາກາດ. ແນວທາງນີ້ລວມເຖິງການສ້າງຂີດຄວາມສາມາດ, ການວາງແຜນຍຸດທະສາດຢ່າງຕໍ່ເນື່ອງ, ການໃຫ້ຄວາມຮູ້ແກ່ຊຸມຊົນ, ຄວາມພະຍາຍາມໃນການຈັດການດ້ານການກຽມພ້ອມກ່ຽວກັບສະພາບອາກາດ, ຄຸນນະພາບຂອງອາກາດ, ຄວາມບໍ່ໝັ້ນຄົງດ້ານອາຫານ, ວຽກທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະບັນຫາຄວາມຍຸຕິທຳດ້ານສິ່ງແວດລ້ອມແລະສະພາບອາກາດ.

ສິ່ງໃໝ່ໆໃນປີນີ້!

1. ເນື່ອງຈາກພວກເຮົາຄາດວ່າຈະໄດ້ຮັບບົດສະເໜີຈຳນວນຫຼວງຫຼາຍ, ພວກເຮົາຈະບໍ່ເຊີນຜູ້ສະໝັກທຸກຄົນໃຫ້ເຂົ້າຮ່ວມໃນການນຳສະເໜີດ້ວຍວາຈາໃນການສະໝັກຮອບນີ້. (ໃນຮອບທີ່ຜ່ານມາ, ການນຳສະເໜີດ້ວຍວາຈາແມ່ນເປັນທາງເລືອກຂອງຜູ້ສະໝັກທຸກຄົນ.)
2. ພວກເຮົາຈະເຊື້ອເຊີນໃຫ້ນຳສະເໜີດ້ວຍວາຈາ ໃນກໍລະນີທີ່ມີຄຳຖາມຕ່າງໆກ່ຽວກັບໂຄງການທີ່ຍື່ນສະເໜີ ແລະຈຳເປັນຕ້ອງມີການຊີ້ແຈງເພີ່ມເຕີມໃຫ້ຈະແຈ້ງ. **ຖ້າໄດ້ຮັບຄຳເຊີນ**, **ຜູ້ສະໝັກຕ້ອງເຂົ້າຮ່ວມໃນການນຳສະເໜີດ້ວຍວາຈາເພື່ອກ້າວໄປສູ່ຂັ້ນຕອນຕໍ່ໄປ**.

ໂຄງການຕ່າງໆຈະໄດ້ຮັບເງິນທຶນບໍ່ຕ່ຳກວ່າ 25,000 ໂດລາ ແລະບໍ່ເກີນ 75,000 ໂດລາ. ໂຄງການຈະເລີ່ມຕົ້ນໃນເດືອນມັງກອນ ປີ 2022 ແລະຈະຕ້ອງເຮັດໃຫ້ສຳເລັດພາຍໃນເດືອນມິຖຸນາ ປີ 2023.

ການປະຊຸມເພື່ອຊີ້ແຈງຂໍ້ມູນຂ່າວສານຈະມີຂຶ້ນໃນວັນທີ 16 **ແລະວັນທີ 25 ເດືອນສິງຫາ**.
ຈະມີຄວາມຊ່ວຍເຫຼືອດ້ານເຕັກນິກເພື່ອຊ່ວຍເຫຼືອຜູ້ສະໝັກໃນຂັ້ນຕອນການສະໝັກ.
ລາຍລະອຽດເພີ່ມເຕີມແມ່ນມີໃຫ້ທາງອອນລາຍທີ່ seattle.gov/environment/ejfund.

ມີຄຳຖາມບໍ? ກະລຸນາສົ່ງອີເມວໄປທີ່: ejfrfp@gmail.com